# Course: Small Business Management

## Chapter 2:
## Entrepreneur

Lecturer: Stamy OUNPHOUVONG
Stamy@su.edu.la
Souphanouvong University, Lao PDR

# ວິຊາ: ການບໍລິຫານທຸລະກິດຂະໜາດນ້ອຍ
**Small Business Management**

# ບົດທີ 2
## ຜູ້ປະກອບການ
## (Entrepreneur)

ສອນໂດຍ: ຊອ. ປທ. ສະຕາມິ ອຸ່ນພູວົງ
ມະຫາວິທະຍາໄລ ສຸພານຸວົງ

# ທົບທວນຄືນ (Review)

a) ຮູບແບບຂອງທຸລະກິດປະກອບມີຫຍັງແດ່?
b) ຈົ່ງອະທິບາຍຂໍ້ດີ, ຂໍ້ເສຍຂອງ ຮູບແບບທຸລະກິດ ເຈົ້າຂອງຜູ້ດຽວ, ບໍລິສັດຮຸ້ນສ່ວນແລະ ບໍລິສັດຈຳກັດ?
c) Startup ແມ່ນຫຍັງ? ມີຄວາມແຕກຕ່າງກັບ SME ຄືແນວໃດ?



**Source of image**: https://www.mintpressnews.com/this-simple-water-purifier-is-saving-lives/205611/




**Source of image**:
https://www.pinterest.com/pin/49539664626054575/




# Lao Product

**Source of image**: Lao National Chamber of Commerce and Industry (LNCCI)
https://lncci.la/made-in-laos/



# Lao Product

**Source of image**: Lao National Chamber of Commerce and Industry (LNCCI)
https://lncci.la/made-in-laos/



# What Is an Entrepreneur?

# ຄວາມໝາຍຂອງຜູ້ປະກອບການ

"ຜູ້ປະກອບການແມ່ນບຸກຄົນທີ່ສ້າງທຸລະກິດໃໝ່, **ແບກຫາບຄວາມສ່ຽງສ່ວນໃຫຍ່ ແລະ ມີຜົນໄດ້ຮັບຫຼາຍທີ່ສຸດ.** ຜູ້ທີ່ປະກອບທຸລະກິດເປັນທີ່ຮູ້ຈັກກັນໃນນາມເປັນຜູ້ປະກອບການ. ຜູ້ປະກອບການມີບົດບາດສຳຄັນໃນເສດຖະກິດ, ການນຳໃຊ້ທັກສະ ແລະ ການລິເລີ່ມທີ່ຈຳເປັນເພື່ອຄາດຄະເນຄວາມຕ້ອງການ ແລະ ນຳເອົາແນວຄວາມຄິດໃໝ່ໄປສູ່ຕະຫຼາດ (Hayes, 2024)".

# ຄວາມໝາຍຂອງຜູ້ປະກອບການ

"ຜູ້ປະກອບການຫມາຍເຖິງ ບຸກຄົນ ຫລື ກຸ່ມຄົນທີ່ມາລວມຕົວກັນໃນລັກສະນະເຮັດກິດຈະກຳໃດຫນຶ່ງທີ່ມີ**ການຜະລິດ, ການຈຳຫນ່າຍ, ການໃຫ້ບໍລິການ** ຢ່າງໃດຢ່າງຫນຶ່ງ ຫລື ຫລາຍຢ່າງເພື່ອຕອບສະຫນອງຄວາມຕ້ອງການຂອງສັງຄົມໃຫ້ເກີດຄວາມພໍໃຈ ແລະ ສ້າງກຳໄລໃຫ້ກັບບຸກຄົນ ຫລື ກຸ່ມຄົນເຫລົ່ານັ້ນ".

# ຄວາມໝາຍຂອງຜູ້ປະກອບການ

ຜູ້ປະກອບການທຸລະກິດຫມາຍເຖິງ ຜູ້ທີ່ດຳເນີນກິດຈະກຳຕ່າງໆ ທາງທຸລະກິດໃນລັກສະນະ **ການຜະລິດ, ການຈັດຈຳຫນ່າຍ ຫລື ການໃຫ້ບໍລິການ** ໂດຍມີວັດຖຸປະສົງດ້ານກຳໄລຕາມເປົ້າຫມາຍທີ່ກຳນົດ.



# ການພັດທະນາ ການເປັນຜູ້ປະກອບການ



ຕ້ອງມີການວາງແຜນຢ່າງເປັນລະບົບ



ສ້າງຜູ້ປະກອບການຂຶ້ນມາໃໝ່ ແລະ ພັດທະນາຍົກ ລະດັບຜູ້ປະກອບການທີ່ມີຢູ່ເດີມໃຫ້ດີກວ່າເກົ່າ.



ສ້າງວັດທະນະທຳ ແລະ ເງື່ອນໄຂສະພາບແວດລ້ອມທີ່ເອື້ອ ຕໍ່ການເປັນຜູ້ປະກອບການ

# ແນວຄິດຂອງການເປັນຜູ້ປະກອບການ

- ຜູ້ປະກອບການສາມາດສ້າງຂຶ້ນໄດ້
- ບໍ່ແມ່ນທຸກຄົນຈະເປັນຜູ້ປະກອບການ, ແຕ່ທຸກຄົນສາມາດມີຄວາມເປັນຜູ້ປະກອບການ ຫລື ພະລັງສ້າງສັນໄດ້
- ທຸລະກິດຂະໜາດນ້ອຍຄືຫນານເພາະພັນ ຫລື ຈຸດເລີ່ມຕົ້ນຂອງການເປັນຜູ້ປະກອບການ
- ນະວັດຕະກຳຄືຈຸດເລີ່ມຕົ້ນແຫ່ງຄວາມສຳເລັດ

# ສິ່ງຈູງໃຈ ແລະ ອຸປະສັກ ສຳລັບຜູ້ປະກອບການໃນການປະກອບທຸລະກິດຂະໜາດນ້ອຍ

# ສິ່ງຈູງໃຈ ສໍາລັບຜູ້ປະກອບການໃນການປະກອບທຸລະກິດຂະໜາດນ້ອຍ

1) ຄວາມອິດສະຫຼະໃນການຕັດສິນໃຈ
2) ຄວາມຮັບຜິດຊອບ
3) ການສ້າງສັນ
4) ການຮຽນຮູ້ ແລະ ການພັດທະນາ
5) ການເສີມສ້າງຄວາມເຊື່ອໝັ້ນ
6) ຜົນກໍາໄລ
7) ຄວາມມີອິດສະຫລະ

# ອຸປະສັກ ສໍາລັບຜູ້ປະກອບການໃນການປະກອບທຸລະກິດຂະໜາດນ້ອຍ

1) ຂາດປະສົບການ ແລະ ຄວາມຊ່ຽວຊານ
2) ຄູ່ແຂ່ງຂັນມີຫຼາຍ
3) ຄວາມສ່ຽງທີ່ເກີດຂຶ້ນດ້ວຍເຫດສຸດວິໄສ
4) ການເຂົ້າຫາແຫຼ່ງທຶນ ແລະ ອື່ນໆ

# ປັດໃຈທີ່ເຮັດໃຫ້ຕັດສິນໃຈເລືອກທີ່ຈະເປັນຜູ້ປະກອບການ

- ການຍອມທີ່ຈະສ່ຽງ (ກ້າສ່ຽງ)
- ຄວາມໝັ້ນໃຈໃນຕົນເອງ
- ຄວາມສົນໃຈ ແລະ ຄວາມຫຼົງໄຫຼ
- ຄວາມຕ້ອງການຄວາມສຳເລັດ
- ເບິ່ງເຫັນໂອກາດ
- ການສະໜັບສະໜູນ ແລະ ສະພາບແວດລ້ອມ

# ແນວທາງໃນການເລີ່ມເຮັດທຸລະກິດ

*ຫລາຍຄົນຄິດເລີ່ມຕົ້ນທຸລະກິດຂອງຕົນເອງເມື່ອມີໂອກາດ ແລະ ອີງໃສ່ສະພາບແວດລ້ອມ ເປັນໃຈ ແລະ ຍັງຕ້ອງໄດ້ຄຳຫນຶງເຖິງປັດໄຈອື່ນໆເຊັ່ນ: ອາຍຸ, ການສຶກສາ ແລະ ປະສົບການ ເປັນຕົ້ນ... ສ່ວນແນວທາງໃນການເລີ່ມເຮັດທຸລະກິດສ່ວນໃຫຍ່ມີ 5 ແນວທາງດັ່ງນີ້:*

- ການເລີ່ມທຸລະກິດໃຫມ່
- ການຊື້ກິດຈະການທີ່ມີການດຳເນີນການຢູ່ແລ້ວ
- ການເຮັດທຸລະກິດແຟນໄຊສ (franchise)
- ການເຮັດທຸລະກິດຄອບຄົວ
- ຮູບແບບອື່ນໆ

# ຄຸນລັກສະນະຂອງຜູ້ປະກອບການທີ່ປະສົບຜົນສຳເລັດ

1) ມີຄວາມກ້າສ່ຽງ
2) ມີຄວາມມຸ່ງໝັ້ນໃນຄວາມສຳເລັດ
3) ມີຄວາມຜູກພັນຕໍ່ກັບເປົ້າໝາຍທີ່ຕັ້ງເອົາໄວ້
4) ມີຄວາມສາມາດໃນການໂນ້ມນ້າວໃຈຜູ້ອື່ນ
5) ມີຄວາມອົດທົນ ແລະ ເຮັດວຽກໜັກ

# ຄຸນລັກສະນະຂອງຜູ້ປະກອບການທີ່ປະສົບຜົນສຳເລັດ

6) ມີຄວາມກະຕືລືລົ້ນ ແລະ ບໍ່ຢຸດນິ້ງ

7) ມີຄວາມສາມາດຮຽນຮູ້ຈາກປະສົບການ

8) ມີຄວາມຮັບຜິດຊອບ

9) ຄວາມເຊື່ອໝັ້ນໃນຕົນເອງ

10) ມີຄວາມສົນໃຈການສະແຫວງຫາຄວາມຮູ້ຢູ່ຕະຫລອດເວລາ

# ຄຸນລັກສະນະຂອງຜູ້ປະກອບການທີ່ປະສົບຜົນສຳເລັດ

11) ມີຄວາມສາມາດໃນການບໍລິຫານ
12) ມີຄວາມຄິດສ້າງສັນ
13) ມີຄວາມສາມາດໃນການປັບສະພາບແວດລ້ອມ
14) ມີຄວາມກ້າຕັດສິນໃຈ
15) ມີຄວາມສາມາດໃນການຄິດ ແລະ ວິເຄາະແຜນທຸລະກິດ ຫລື ໂຄງການລົງທຶນ

# ຄຸນລັກສະນະຂອງຜູ້ປະກອບການທີ່ປະສົບຜົນສຳເລັດ

16) ມີຄວາມສາມາດໃນການສ້າງພັນທະມິດ
17) ມີຄວາມຊື່ສັດ
18) ມີຄວາມປະຢັດເພື່ອອະນາຄົດ
19) ມີຄວາມຮັບຜິດຊອບຕໍ່ສັງຄົມ.

# ສັງລວມ 7 ຄຸນລັກສະນະ ຂອງຜູ້ປະກອບການທີ່ປະສົບຜົນສຳເລັດ

1) ຕ້ອງເປັນນັກສະແຫວງຫາໂອກາດ
2) ຕ້ອງເປັນຄົນທີ່ກ້າສ່ຽງ
3) ຕ້ອງເປັນຄົນທີ່ມີແນວຄິດລິເລີ່ມ
4) ຕ້ອງເປັນຄົນທີ່ບໍ່ທໍ້ຖອຍງ່າຍ
5) ຕ້ອງເປັນຄົນທີ່ໄຝ່ຮຽນຮູ້ຢູ່ສະເຫມີ
6) ຕ້ອງເປັນຄົນທີ່ມີວິໄສທັດກວ້າງໄກ
7) ຕ້ອງເປັນຄົນທີ່ມີເຄືອຂ່າຍທາງສັງຄົມ

# ຄວາມຫລາກຫລາຍຂອງຜູ້ປະກອບການ

*ຜູ້ປະກອບການມັກຈະມີຄວາມມັກ, ຮັກໃນການປະກອບທຸລະກິດໃນຫຼາຍປະເພດ ແລະ ຮູບແບບ, ແຕ່ລະຄົນມີລັກສະນະເປັນເອກະລັກ, ແຮງຈູງໃຈ, ແລະ ວິທີການທຸລະກິດທີ່ແຕກຕ່າງກັນ. ບັນດາຂໍ້ຕໍ່ນີ້ແມ່ນບາງປະເພດຂອງຜູ້ປະກອບການທົ່ວໄປ:*

# ຄວາມຫລາກຫລາຍຂອງຜູ້ປະກອບການ

1. **ຜູ້ປະກອບການອານຸກົມ Serial Entrepreneurs:** ບຸກຄົນເຫຼົ່ານີ້ຖືກຂັບເຄື່ອນໂດຍຄວາມຕື່ນເຕັ້ນຂອງການເລີ່ມຕົ້ນ ແລະ ການຂະຫຍາຍຕົວທຸລະກິດ. ເຂົາເຈົ້າມັກຈະເລີ່ມທຸລະກິດໃໝ່ໆຢູ່ເລື້ອຍໆ, ບາງຄັ້ງກໍ່ເລີ່ມເຮັດທຸລະກິດຫຼາຍຢ່າງພ້ອມກັນ, ແລະ ອາດຈະມີການປ່ຽນທຸລະກິດໃໝ່ຕະຫຼອດ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**2. ຜູ້ປະກອບການທາງດ້ານສັງຄົມ:** ຜູ້ປະກອບການທາງດ້ານສັງຄົມຖືກກະຕຸ້ນໂດຍຄວາມປາຖະໜາທີ່ຈະສ້າງການປ່ຽນແປງທາງດ້ານສັງຄົມ ຫຼື ສິ່ງແວດລ້ອມໃນທາງບວກ. ພວກເຂົາເຈົ້າສຸມໃສ່ການແກ້ໄຂບັນຫາສັງຄົມໂດຍຜ່ານຮູບແບບທຸລະກິດທີ່ມີນະວັດກໍາ, ມັກຈະປະສົມປະສານຜົນກໍາໄລທີ່ມີຜົນກະທົບທາງສັງຄົມ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**3. ຜູ້ປະກອບການດ້ານເທັກໂນໂລຊີ:** ຜູ້ປະກອບການດ້ານເທັກໂນໂລຊີມີສ່ວນຮ່ວມຫຼາຍໃນຂະແໜງເຕັກໂນໂລຢີ, ພັດທະນາ ແລະ ເປີດຕົວຜະລິດຕະພັນ ຫຼື ບໍລິການທີ່ມີນະວັດກໍາທີ່ນໍາໃຊ້ເຕັກໂນໂລຢີ. ພວກເຂົາມັກຈະພັດທະນາ ແລະ ສ້າງນະວັດຕະກໍາໃນຂົງເຂດຕ່າງໆ ເຊັ່ນ: ຊອບແວ, ຮາດແວ, ປັນຍາປະດິດ ຫຼື ເຕັກໂນໂລຊີຊີວະພາບຕ່າງໆ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**4. ເຈົ້າຂອງທຸລະກິດຂະໜາດນ້ອຍ:** ເຈົ້າຂອງທຸລະກິດຂະໜາດນ້ອຍມັກຈະດຳເນີນທຸລະກິດໃນທ້ອງຖິ່ນເພື່ອຮັບໃຊ້ຊຸມຊົນຂອງພວກເຂົາ. ພວກເຂົາເຈົ້າອາດຈະປະກອບມີເຈົ້າຂອງຮ້ານອາຫານ, ເຈົ້າຂອງຮ້ານຂາຍຍ່ອຍ, freelancers, ທີ່ປຶກສາ ແລະ ພໍ່ຄ້າ. ຜູ້ປະກອບການເຫຼົ່ານີ້ມັກຈະຈັດລຳດັບຄວາມສຳຄັນຂອງເອກະລາດ, ຄວາມຍືດຫຍຸ່ນ ແລະ ການເຊື່ອມຕໍ່ສ່ວນບຸກຄົນກັບລູກຄ້າ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**5. ຜູ້ປະກອບການຂອງບໍລິສັດ (Intrapreneurs):** ບຸກຄົນເຫຼົ່ານີ້ມັກເຮັດວຽກຢູ່ໃນອົງການຈັດຕັ້ງຂະໜາດໃຫຍ່ທີ່ສະແດງໃຫ້ເຫັນລັກສະນະຂອງຜູ້ປະກອບການຢ່າງຊັດເຈນ. ພວກເຂົາຂັບເຄື່ອນການປະດິດສ້າງ ແລະ ການຂະຫຍາຍຕົວໂດຍການພັດທະນາຜະລິດຕະພັນ, ບໍລິການ ຫຼື ຂະບວນການໃໝ່ພາຍໃນໂຄງສ້າງຂອງບໍລິສັດ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**6. ຜູ້ປະກອບການດ້ານວິຖີຊີວິດ:** ຜູ້ປະກອບການວິຖີຊີວິດໃຫ້ຄວາມສຳຄັນກັບຄວາມສຳເລັດສ່ວນຕົວ ແລະ ຄວາມສົມດຸນຂອງຊີວິດໃນການເຮັດວຽກຫຼາຍກວ່າການເຕີບໂຕ ຫຼື ຄວາມສຳເລັດທາງດ້ານການເງິນ. ພວກເຂົາເຈົ້າມັກຈະສ້າງທຸລະກິດທີ່ສອດຄ່ອງກັບຄວາມມັກ, ວຽກອະດິເລກ ຫຼື ຄວາມສົນໃຈ ທີ່ສາມາດໃຫ້ພວກເຂົາດຳລົງຊີວິດຕາມຄວາມຕ້ອງການໃນຂະນະທີ່ສ້າງລາຍຮັບ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

7. **ຜູ້ປະກອບການດ່ຽວ:** ຜູ້ປະກອບການດ່ຽວ, ເຊິ່ງເອີ້ນກັນວ່າ solopreneurs, ແມ່ນບຸກຄົນທີ່ດຳເນີນທຸລະກິດຂອງເຂົາເຈົ້າດ້ວຍຕົວຄົນດຽວໂດຍບໍ່ມີພະນັກງານ. ພວກເຂົາຈັດການວຽກງານທຸກດ້ານຂອງທຸລະກິດ ເຊັ່ນ: ການຕະຫຼາດ, ການເງິນ ແລະ ການບໍລິການລູກຄ້າ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**8. ຜູ້ປະກອບການດ້ານວັດທະນະທຳ:** ຜູ້ປະກອບການດ້ານວັດທະນະທຳສຸມໃສ່ການສົ່ງເສີມມໍລະດົກວັດທະນະທຳ, ສິລະປະ ແລະ ຄວາມຄິດສ້າງສັນ. ເຂົາເຈົ້າອາດຈະເລີ່ມທຸລະກິດເຊັ່ນ: ຫ້ອງສະແດງສິລະປະ, ສະຕູດິໂອດົນຕີ, ກິດຈະກຳວັດທະນະທຳ, ຫຼື ເຄື່ອງຫັດຖະກຳ, ເພື່ອແນໃສ່ປົກປັກຮັກສາ ແລະ ສົ່ງເສີມປະເພນີວັດທະນະທຳ.

# ຄວາມຫລາກຫລາຍຂອງຜູ້ປະກອບການ

**9. ຜູ້ປະກອບການສີຂຽວ:** ຜູ້ປະກອບການສີຂຽວແມ່ນອຸທິດຕົນເພື່ອຄວາມຍືນຍົງ ແລະ ການອະນຸລັກສິ່ງແວດລ້ອມ. ພວກເຂົາພັດທະນາຜະລິດຕະພັນ, ການບໍລິການ ແລະ ເຕັກໂນໂລຢີທີ່ເປັນມິດກັບສິ່ງແວດລ້ອມທີ່ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ປະກອບສ່ວນໄປສູ່ອະນາຄົດທີ່ຍືນຍົງກວ່າ.

# 6 ທັກສະທີ່ຜູ້ປະກອບການທຸກຄົນຄວນມີ ເພື່ອຈະປະສົບຜົນສຳເລັດໃນໂລກຂອງທຸລະກິດທີ່ເຕັມໄປດ້ວຍການແຂ່ງຂັນ ແລະ ການປ່ຽນແປງຢ່າງໄວວາ (ອ້າງອີງຈາກ The BIZ HUP)

1. ການສື່ສານ /ສາມາດແບ່ງອອກເປັນ 2 ພາກສ່ວນຄື:
   - ການສື່ສານພາຍໃນ
   - ການສື່ສານພາຍນອກ.
2. ການວິເຄາະ ແລະ ວາງແຜນ
3. ການຕະຫຼາດ ແລະ ການສ້າງເຄືອຂ່າຍ
4. ການເຮັດວຽກເປັນທີມ ແລະ ການເປັນຜູ້ນຳ
5. ການບໍລິຫານເວລາ
6. ການຈັດການກັບຄວາມກົດດັນ/(work-life balance)

# ວຽກບ້ານ/Home work

1) ຈົ່ງອະທິບາຍຄວາມຫມາຍຂອງຄຳວ່າ ຜູ້ປະກອບການ ວ່າມີຄວາມສຳຄັນແນວໃດ?
2) ຈົ່ງຍົກຕົວຢ່າງ ຜູ້ປະກອບການທີ່ເຮົາເຫັນວ່າປະສົບຜົນເລັດໃນທຸລະກິດໃດຫນຶ່ງ ທີ່ມີຢູ່ໃນຊຸມຊົນ ຫລື ໃນປະເທດ ແລະ ຕ່າງປະເທດ ທີ່ເຮົາຮູ້ຈັກວ່າເປັນຜູ້ປະກອບການດ້ານໃດ.
3) ພວກນ້ອງຄິດວ່າທ່າມກາງຄວາມຫລາກຫລາຍຂອງຜູ້ປະກອບການ ພວກນ້ອງຄິດຕົນເອງມັກຮູບແບບຜູ້ປະກອບການແບບໃດ, ຍ້ອນຫຍັງ?
4) ປັດໄຈໃດທີ່ເຮັດໃຫ້ຕັດສິນໃຈເລືອກທີ່ຈະເປັນຜູ້ປະກອບການ?

# Reference

Hayes, A. (2024, February 14). *Entrepreneur: What It Means to Be One and How to Get Started*. Retrieved from www.investopedia.com: https://www.investopedia.com/terms/e/entrepreneur.asp

THEBIZHUB. (2023, February 13). *What is the difference between Startup and SME*. Retrieved from www.thebizhub.la: https://www.thebizhub.la/blog-detail/654310e657d73ad809105c53

Thongvanh, S.(2007). *Small Business Management.* published by the Faculty of Economics and Business Management, National University.

ຂອບໃຈ

Thank you